ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ສະຖາບັນຄົ້ນຄ້ວາ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ຖະໜົນບຸນດັດໃໝ່ ໝອງບຶກ ຕູ້ ປນ 7864, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856-30-5208055

# ບົດລາຍງານ ສະພາບຝຸ່ນລະອອງ ທີ່ມີຂະໜາດນ້ອຍກວ່າ 2.5 ໄມຄຣອນ (PM 2.5) ຂອງວັນທີ 31 ມີນາ 2023

ລາຍງານສະພາບຜົນການວັດແທກຝຸ່ນລະອອງຂະໜາດນ້ອຍກວ່າ 2.5 ໄມຄຣອນ (PM 2.5) ປະຈຳວັນທີ **31/03/2023** ຈາກຂໍ້ມູນຂອງ ສະຖານີວັດແທກຝຸ່ນລະອອງ PM 2.5 ຂອງ ສະຖາບັນຄົ້ນຄວ້າ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີຄື: ບ້ານອາກາດ (ກົມອຸຕຸນິຍົມ ແລະ ອຸທົກກະສາດ), ບ້ານ ຊຽງຍືນ (ສວນເຈົ້າອານຸວົງ), ບ້ານ ພູຊ້າງຄຳ (ສະໜາມບິນ ຫຼວງພະບາງ), ບ້ານ ດອນໄຊ (ພຊສ ແຂວງ ອຸດົມໄຊ),ບ້ານ ນາລື (ພຊສ ແຂວງ ຫຼວງນໍ້າທາ), ບ້ານ ອຸດົມ (ສະໜາມບິນ ແຂວງ ບໍ່ແກ້ວ), ບ້ານ ທົ່ງຍືນ (ອຸຕຸນິຍົມ ແຂວງ ສະຫວັນນະເຂດ) ແລະ ບ້ານຈອມເພັດ (ອຸຕຸນິຍົມ ແຂວງ ຄຳມ່ວນ). ໃນການຈັດລະດັບຄຸນນະພາບອາກາດ ທີ່ມີຜົນກະທົບຕໍ່ສຸຂະພາບຢູ່ແຕ່ລະສະຖານີ ມີຄືດັ່ງລຸ່ມນີ້:

**ຕາຕະລາງ 1: ຜົນການວັດແທກຝຸ່ນລະອອງ ທີ່ມີຂະໜາດນ້ອຍກວ່າ 2.5 ໄມຄຣອນ (PM 2.5)**
**ເລີ່ມແຕ່ເວລາ 7 ໂມງເຊົ້າຂອງວັນທີ 30/03/2023 ຫາ ເວລາ 7 ໂມງເຊົ້າຂອງວັນທີ 31/03/2023**

| ລ/ດ | ຊື່ຈຸດຕິດຕາມວັດແທກຝຸ່ນລະອອງ PM 2.5 | PM 2.5 (µg/m3 /24 h) | ດັດຊະນີຄຸນນະພາບອາກາດ (AQI) | ການຈັດລະດັບ AQI |
|---|---|---|---|---|
| | ຄ່າມາດຕະຖານ | 50 | | |
| 1 | ບ້ານ ອາກາດ (ກົມອຸຕຸນິຍົມ ແລະ ອຸທົກກະສາດ) | 59.0 | 111 | ມີຜົນກະທົບເລັກນ້ອຍຕໍ່ສຸຂະພາບ |
| 2 | ບ້ານ ຊຽງຍືນ (ສວນເຈົ້າອານຸວົງ) | 54.0 | 105 | ມີຜົນກະທົບເລັກນ້ອຍຕໍ່ສຸຂະພາບ |
| 3 | ບ້ານ ພູຊ້າງຄຳ (ສະໜາມບິນ ຫຼວງພະບາງ) | 158.8 | 209 | ມີຜົນກະທົບປານກາງຕໍ່ສຸຂະພາບ |
| 4 | ບ້ານ ດອນໄຊ (ພຊສ ແຂວງ ອຸດົມໄຊ) | 123.4 | 178 | ເລີ້ມມີຜົນກະທົບຕໍ່ສຸຂະພາບ |
| 5 | ບ້ານ ນາລື (ພຊສ ແຂວງ ຫຼວງນໍ້າທາ) | 132.0 | 185 | ເລີ້ມມີຜົນກະທົບຕໍ່ສຸຂະພາບ |
| 6 | ບ້ານ ອຸດົມ (ສະໜາມບິນບໍ່ແກ້ວ) | 168.6 | 219 | ມີຜົນກະທົບປານກາງຕໍ່ສຸຂະພາບ |
| 7 | ບ້ານ ທົ່ງຍືນ (ອຸຕຸນິຍົມ ແຂວງ ສະຫວັນນະເຂດ) | 44.0 | 76 | ດີປານກາງ |
| 8 | ບ້ານ ຈອມເພັດ (ອຸຕຸນິຍົມ ແຂວງ ຄຳມ່ວນ) | 47.0 | 87 | ດີປານກາງ |

| ຄວາມໝາຍ | 0-25 | 26-50 | 51-100 | 101-150 | 151-200 | 201-300 | >300 |
|---|---|---|---|---|---|---|---|
| | ດີຫຼາຍ | ດີ | ດີປານກາງ | ມີຜົນກະທົບເລັກນ້ອຍຕໍ່ສຸຂະພາບ | ເລີ້ມມີຜົນກະທົບຕໍ່ສຸຂະພາບ | ມີຜົນກະທົບປານກາງ ຕໍ່ສຸຂະພາບ | ມີຜົນກະທົບສູງຕໍ່ສຸຂະພາບ |

**ຂໍ້ມູນໂດຍ:** *ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ*
*ສະຖາບັນຄົ້ນຄ້ວາ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ*

## ຕາຕະລາງ 2: ຄວາມໝາຍຂອງດັດຊະນີຄຸນນະພາບອາກາດ ທີ່ມີຜົນຕໍ່ສຸຂະພາບ

| **AQI** | **ຄວາມເຂັ້ມຂຸ້ນ PM 2.5 (µg/m3/24h)** | **ຄວາມໝາຍ** | **ຄໍາອະທິບາຍ** |
|---|---|---|---|
| 0-25 | 0-25 | ດີຫລາຍ | ຄຸນນະພາບອາກາດດີຫຼາຍ ເໝາະສໍາລັບທຸກຄົນໃນການເຮັດກິດຈະກໍາກາງແຈ້ງແລະ ການທ່ອງທ່ຽວ ໂດຍສະເພາະ ຜູ້ເຖົ້າ, ເດັກນ້ອຍ ແລະ ຜູ້ທີ່ມີສຸຂະພາບບໍ່ແຂງແຮງ ຫຼື ຜູ້ທີ່ຕ້ອງໄດ້ເບິ່ງແຍງເປັນພິເສດ ຄວນໄດ້ຮັບເອົາອາກາດທີ່ບໍລິສຸດ. ສໍາລັບອາຄານບ້ານເຮືອນ, ສໍານັກງານ, ຫ້ອງການ ຄວນເປີດຮັບເອົາອາກາດເຂົ້າມາຖ່າຍເທ ເພື່ອເຮັດໃຫ້ຄຸນນະພາບດີຂຶ້ນ. |
| 26-50 | 26-37 | ດີ | ຄຸນນະພາບອາກາດດີ: ເໝາະສໍາລັບປະຊາຊົນທົ່ວໄປໃນການກິດຈະກໍາກາງແຈ້ງ ແລະ ການທ່ອງທຽວ |
| 51-100 | 38-50 | ປານກາງ | **ສໍາລັບປະຊາຊົນທົ່ວໄປ**: ສາມາດເຮັດກິດຈະກໍາກາງແຈ້ງໄດ້ຕາມປົກກະຕິ.<br>**ຜູ້ທີ່ຕ້ອງເບິ່ງແຍງເປັນພິເສດ:** ຖ້າຫາກມີອາການເບື້ອງຕົ້ນ ເຊັ່ນ: ໄອ, ຫາຍໃຈບໍ່ສະດວກ ຄວນຫຼີກລ້ຽງກິດຈະກໍາກາງແຈ້ງ |
| 101-150 | 51-90 | ມີຜົນກະທົບຕໍ່ຄົນປ່ວຍ ຫຼື ຮ່າງກາຍອ່ອນເພຍ | **ສໍາລັບປະຊາຊົນທົ່ວໄປ**: ຫຼີກລ້ຽງການເຮັດກິດຈະກໍາກາງແຈ້ງ ແລະ ໃຊ້ອຸປະກອນປ້ອງກັນ<br>**ຜູ້ທີ່ຕ້ອງເບິ່ງແຍງເປັນພິເສດ:** ຖ້າມີອາການເບື້ອງຕົ້ນ ເຊັ່ນ: ໄອ, ຫາຍໃຈລໍາບາກ, ແສບຕາ ຄວນໄປປຶກສາແພດ |
| 151-200 | 91-150 | ມີຜົນກະທົບຕໍ່ສຸຂະພາບ | **ສໍາລັບປະຊາຊົນທົ່ວໄປ**: ຫຼີກລ້ຽງການເຮັດກິດຈະກໍາກາງແຈ້ງ ພ້ອມທັງເຝົ້າລະວັງສຸຂະພາບ ແລະ ໃຊ້ອຸປະກອນປ້ອງກັນຕົນເອງ<br>**ຜູ້ທີ່ຕ້ອງເບິ່ງແຍງເປັນພິເສດ:** ຄວນຫຼີກລ້ຽງສໍາລັບກິດຈະກໍາກາງແຈ້ງ ແລະ ໃຊ້ອຸປະກອນປ້ອງກັນຕົນເອງ ຖ້າຫາກມີອາການເບື້ອງຕົ້ນເຊັ່ນ: ເປັນໄອ, ຫາຍໃຈບໍ່ສະດວກ, ແສບຕາ,ແໜ້ນໜ້າເອິກ, ວິນຫົວ, ຫົວໃຈເຕັ້ນບໍ່ປົກກະຕິ, ປວດຮາກ ແລະ ອ່ອນເພຍ ຄວນໄປປຶກສາແພດ |
| 201-300 | 151-250 | ມີຜົນກະທົບປານກາງຕໍ່ສຸຂະພາບ | **ສໍາລັບປະຊາຊົນທົ່ວໄປ**: ຫຼີກລ້ຽງການເຮັດກິດຈະກໍາກາງແຈ້ງ ພ້ອມທັງເຝົ້າລະວັງສຸຂະພາບ ແລະ ໃຊ້ອຸປະກອນປ້ອງກັນ<br>**ຜູ້ທີ່ຕ້ອງເບິ່ງແຍງເປັນພິເສດ:** ຄວນຫຼີກລ້ຽງສໍາລັບກິດຈະກໍາກາງແຈ້ງ ແລະ ໃຊ້ອຸປະກອນປ້ອງກັນ ຫາກມີອາການເບື້ອງຕົ້ນ ເຊັ່ນ: ໄອ, ຫາຍໃຈລໍາບາກ, ແສບຕາ, ແໜ້ນໜ້າເອິກ, ວິນຫົວ, ຫົວໃຈເຕັ້ນບໍ່ປົກກະຕິ, ປວດຮາກ ແລະ ອ່ອນເພຍຄວນປຶກສາແພດ |
| >301 | 251 ຂຶ້ນໄປ | ມີຜົນກະທົບສູງຕໍ່ສຸຂະພາບ | ທຸກຄົນຄວນຫຼີກລ້ຽງການເຮັດກິດຈະກໍາກາງແຈ້ງ, ຫຼີກລ້ຽງພື້ນທີ່ທີ່ມີມົນພິດທາງອາກາດສູງ ຫຼື ຖ້າມີຄວາມຈໍາເປັນໃນການເຂົ້າພື້ນທີ່ຕ້ອງໃຊ້ອຸປະກອນປ້ອງກັນຕົນເອງ<br>ຖ້າມີອາການຜິດປົກກະຕິທາງສຸຂະພາບຈາກສາເຫດໄດ້ຮັບມົນລະພິດ ຄວນໄປປຶກສາແພດຢ່າງຮີບດ່ວນ |